ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກຳມະການແຫ່ງຊາດເພື່ອຕ້ານການຟອກເງິນ
ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ

ເລກທີ: 01 /ຄຕຟງ
ນະຄອນຫຼວງວຽງຈັນ, ວັນທີ 06 JAN 2025

# ຄຳແນະນຳ
# ວ່າດ້ວຍການດຳເນີນຄະດີຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ

- ອີງຕາມ ກົດໝາຍວ່າດ້ວຍ ການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບປັບປຸງ ສະບັບເລກທີ 64/ສພຊ, ລົງວັນທີ 01 ກໍລະກົດ 2024;
- ອີງຕາມ ກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາ ສະບັບ ເລກທີ 37/ສພຊ, ລົງວັນທີ 14 ພະຈິກ 2017;
- ອີງຕາມ ປະມວນກົດໝາຍອາຍາ ສະບັບເລກທີ 26/ສພຊ, ລົງວັນທີ 17 ພຶດສະພາ 2017.

## ຄະນະກຳມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ການສະໜອງທຶນ ໃຫ້ແກ່ການກໍ່ການຮ້າຍ ອອກຄຳແນະນຳ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຄຳແນະນຳສະບັບນີ້ ກຳນົດຫຼັກການ, ລະບຽບການ, ວິທີການ ແລະ ຂັ້ນຕອນ ຂອງການສືບສວນ-ສອບສວນ, ການສັ່ງຟ້ອງຜູ້ຖືກຫາ, ການຕັດສິນ ແລະ ການຈັດຕັ້ງປະຕິບັດຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດ ກ່ຽວກັບ ຄະດີການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ເພື່ອຮັບປະກັນການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກຳອື່ນທີ່ກ່ຽວຂ້ອງ ກັບວຽກງານ ການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແນໃສ່ໃຫ້ອົງການດຳເນີນຄະດີມີບ່ອນອີງໃນການຈັດຕັ້ງປະຕິບັດຢ່າງມີປະສິດທິພາບ.

### ມາດຕາ 2 (ປັບປຸງ) ການຟອກເງິນ

ການຟອກເງິນ ແມ່ນ ການປ່ຽນຮູບ, ນຳໃຊ້, ເຄື່ອນຍ້າຍ, ແລກປ່ຽນ, ໄດ້ມາ, ຄອບຄອງ, ໂອນກຳມະສິດທີ່ແທ້ຈິງ ຂອງເງິນ ຫຼື ຊັບສິນອື່ນ ໂດຍ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ຫຼື ຕ່າງປະເທດ ຊຶ່ງຮູ້, ໄດ້ຮູ້ ຫຼື ສົງໄສວ່າ ເງິນ ຫຼື ຊັບສິນນັ້ນ ມາຈາກການກໍ່ອາຊະຍາກຳ ຫຼື ການກະທຳຜິດຕົ້ນ ເພື່ອປົກປິດ ຫຼື ເຊື່ອງອຳພາງລັກສະນະ, ທີ່ມາຂອງເງິນ, ທີ່ຕັ້ງ ຂອງຊັບສິນ.

ການກະທຳ ທີ່ເປັນການຟອກເງິນ ມີ ດັ່ງນີ້:

1. ການປ່ຽນຮູບ ຫຼື ການໂອນ ເງິນ ຫຼື ຊັບສິນອື່ນ ໂດຍມີຈຸດປະສົງ ປົກປິດ ເງິນ ຫຼື ຊັບສິນ ທີ່ໄດ້ມາໂດຍບໍ່ຖືກຕ້ອງຕາມກົດໝາຍ ຫຼື ເຊື່ອງອຳພົນຈາກການກະທຳຜິດຕົ້ນ ຫຼື ໃຫ້ການຊ່ວຍເຫຼືອຜູ້ກະທຳຜິດຕົ້ນ ເພື່ອຫຼົບຫຼີກຄວາມຮັບຜິດຊອບຈາກການກະທຳຜິດ;

2. ການປົກປິດ ຫຼື ເຊື່ອງອຳ ແຫຼ່ງ, ສະຖານທີ່, ການໂອນ, ການຄອບຄອງ, ການເຄື່ອນຍ້າຍ ຫຼື ການເປັນເຈົ້າຂອງ ຫຼື ກຳມະສິດ ທີ່ແທ້ຈິງຂອງເງິນ ຫຼື ຊັບສິນນັ້ນ;

3. ການໄດ້ມາ, ການຄອບຄອງ, ການນຳໃຊ້ທຶນ ທີ່ມາຈາກການກະທຳຜິດຕົ້ນ ເຊັ່ນ ການໃຫ້ກູ້ຢືມເງິນ ຫຼື ຊັບສິນອື່ນ, ການນຳໃຊ້ ເງິນ ຫຼື ຊັບສິນນັ້ນ ເຂົ້າໃສ່ການລົງທຶນໂດຍກົງ;

4. ການກະທຳ ຫຼື ການຮ່ວມກັບກະທຳຜິດ ເປັນຕົ້ນ ການເຂົ້າຮ່ວມວາງແຜນ, ຊ່ວຍເຫຼືອ, ປະຕິບັດ, ສົ່ງເສີມ, ອຳນວຍຄວາມສະດວກ ຫຼື ໃຫ້ຄຳປຶກສາ ລວມທັງຄວາມພະຍາຍາມກໍ່ການກະທຳຜິດ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1, 2 ແລະ 3 ມາດຕານີ້.

ນອກຈາກນີ້ ການຟອກເງິນຍັງສະແດງອອກ ດັ່ງນີ້:

1. ການຮັບຮູ້ໂດຍເຈດຕະນາກ່ຽວກັບການກະທຳ ທີ່ນຳໄປເຖິງການຟອກເງິນ;

2. ເຫດການ ຫຼື ຫຼັກຖານ ທີ່ຢັ້ງຢືນວ່າ ເງິນ ຫຼື ຊັບສິນນັ້ນ ໄດ້ມາຈາກກະທຳຜິດຕົ້ນ ໂດຍບໍ່ຈຳເປັນມີການຕັດສິນຂອງສານ.

## ມາດຕາ 3 (ໃໝ່) ຮູບແບບຂອງການຟອກເງິນ

ການຟອກເງິນ ມີສີ່ ຮູບແບບ ດັ່ງນີ້:

1. ການຟອກເງິນດ້ວຍຕົນເອງ ຊຶ່ງແມ່ນ ການຟອກເງິນ ໂດຍບຸກຄົນ ຫຼື ນິຕິບຸກຄົນ ທີ່ກະທຳຜິດຕົ້ນ ແລະ ນຳເອົາຜົນຈາກການກະທຳຜິດຕົ້ນນັ້ນມາຟອກ;

2. ການຟອກເງິນໂດຍບຸກຄົນທີ່ສາມ ຊຶ່ງແມ່ນ ການຟອກເງິນ ໂດຍບຸກຄົນ ຫຼື ນິຕິບຸກຄົນໃດໜຶ່ງ ທີ່ບໍ່ມີສ່ວນຮ່ວມກັບການກະທຳຜິດຕົ້ນ;

3. ການຟອກເງິນໂດຍບໍ່ມີຄວາມຜິດຕົ້ນ ຊຶ່ງແມ່ນ ການຟອກເງິນ ໂດຍບໍ່ມີເຫດການ ຫຼື ຫຼັກຖານຢັ້ງຢືນກ່ຽວກັບການກະທຳຜິດຕົ້ນ;

4. ການຟອກເງິນທີ່ມີການກະທຳຜິດຕົ້ນຢູ່ຕ່າງປະເທດ ຊຶ່ງແມ່ນ ການຟອກເງິນ ໂດຍມີການກະທຳຜິດຕົ້ນເກີດຂຶ້ນຢູ່ນອກດິນແດນຂອງ ສປປ ລາວ.

## ມາດຕາ 4 (ປັບປຸງ) ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ

ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແມ່ນ ການເຄື່ອນໄຫວທຸກຮູບແບບ ໂດຍເຈດຕະນາ ທັງທາງກົງ ຫຼື ທາງອ້ອມ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ຫຼື ຕ່າງປະເທດ ທີ່ໃຫ້, ພະຍາຍາມໃຫ້, ຮິບໂຮມ, ວາງແຜນ, ຊ່ວຍເຫຼືອ, ດຳເນີນການ, ໃຫ້ຄຳປຶກສາ, ອຳນວຍຄວາມສະດວກ, ສົມຮູ້ຮ່ວມຄິດ, ຈັດຕັ້ງ ຫຼື ຊີ້ນຳ ບຸກຄົນອື່ນກະທຳຜິດ, ຈັດຫາທຶນ ທີ່ຖືກຕ້ອງ ຫຼື ບໍ່ຖືກຕ້ອງຕາມກົດໝາຍ, ທັງໝົດ ຫຼື ບາງສ່ວນ ເພື່ອສະໜອງໃຫ້ແກ່ການກໍ່ການຮ້າຍ, ຜູ້ກໍ່ການຮ້າຍ ແລະ ອົງການກໍ່ການຮ້າຍ ຫຼື ການກະທຳທີ່ພົວພັນກັບການກໍ່ການຮ້າຍໂດຍສະເພາະ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 13 ຂອງກົດໝາຍວ່າດ້ວຍ ການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບປັບປຸງ ເຖິງວ່າທຶນທີ່ໄດ້ຮັບມານັ້ນ ຈະຖືກນຳໃຊ້ທັງໝົດ ຫຼື ບາງສ່ວນ ຫຼື ບໍ່ນຳໃຊ້ເຂົ້າໃນການກະທຳຕົວຈິງກໍຕາມ.

ການກະທຳຜິດໃນສະຖານການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ລວມເຖິງການສະໜອງທຶນໃຫ້ແກ່ການເດີນທາງຂອງບຸກຄົນຜູ້ທີ່ເດີນທາງໄປລັດອື່ນ ຫຼື ຕ່າງປະເທດ ເພື່ອຈຸດປະສົງທີ່ຈະກະທຳຜິດ, ການວາງແຜນ ຫຼື ການກະກຽມ ຫຼື ການເຂົ້າຮ່ວມ, ການກະທຳກໍ່ການຮ້າຍ ຫຼື ການສະໜອງ ຫຼື ການຝຶກອົບຮົມດ້ານການກໍ່ການຮ້າຍ.

ການພິສູດຄວາມຕັ້ງໃຈ ແລະ ຄວາມຮັບຮູ້ຂອງຜູ້ກະທຳຜິດ ແມ່ນ ພິຈາລະນາຈາກສະຖານະການຄວາມເປັນຈິງ ແລະ ຕ້ອງສາມາດນຳໃຊ້ໄດ້ ບໍ່ວ່າຜູ້ທີ່ຖືກຫານັ້ນ ຈະກະທຳຜິດ ຢູ່ພາຍໃນປະເທດ ຫຼື ຕ່າງປະເທດ ທີ່ກຸ່ມຜູ້ກໍ່ການຮ້າຍ ຫຼື ອົງການກໍ່ການຮ້າຍຕັ້ງຢູ່ ຫຼື ການກໍ່ການຮ້າຍເກີດຂຶ້ນ ຫຼື ຈະເກີດຂຶ້ນ.

**ມາດຕາ 5 (ປັບປຸງ) ອະທິບາຍຄຳສັບ**

ຄຳຊັບທີ່ໃຊ້ໃນຄຳແນະນຳສະບັບນີ້ ມີຄວາມໝາຍດັ່ງລຸ່ມນີ້:

1. **ອົງການດຳເນີນຄະດີອາຍາ** ໝາຍເຖິງ ອົງການສືບສວນ-ສອບສວນ, ອົງການໄອຍະການ ແລະ ສານ;
2. **ການກະທຳຜິດຕົ້ນ** ແມ່ນ ການກະທຳຜິດທາງອາຍາ ທີ່ເປັນຕົ້ນເຫດຂອງການຟອກເງິນ ລວມທັງການກະທຳຜິດນອກດິນແດນ ສປປ ລາວ ທີ່ກໍ່ໃຫ້ເກີດມີຜົນຈາກການກະທຳຜິດຕົ້ນ ຄື ການສໍ້ໂກງຊັບ, ການປຸ້ນຊັບ, ການລັກຊັບ, ການຄາດຕະກຳ, ການທຳຮ້າຍຮ່າງກາຍ, ການລັກພາຕົວ, ການກັກຂັງ ແລະ ການຈັບເປັນຕົວປະກັນ, ການຊື້ ຂາຍຊັບທີ່ຜິດກົດໝາຍ, ການປອມແປງເງິນ ຫຼື ການໃຊ້ເງິນປອມ, ການປອມແປງແຊັກ, ການນຳໃຊ້ແຊັກ ຫຼື ພັນທະບັດອື່ນໂດຍບໍ່ຖືກຕ້ອງຕາມກົດໝາຍ, ການປອມແປງເອກະສານ ຫຼື ການໃຊ້ເອກະສານປອມ, ການລະເມີດຊັບສິນທາງປັນຍາ, ການສໍ້ລາດບັງຫຼວງ, ການຄ້າປະເວນີຂອງບຸກຄົນອື່ນ, ການຄ້າມະນຸດ, ການຂົນຂວາຍສິ່ງຄົນອອກ ຫຼື ການເອົາຄົນເຂົ້າປະເທດ, ການຊື້ ຂາຍ, ນຳເຂົ້າ ອາວຸດເສິກ ຫຼື ວັດຖຸລະເບີດ ໂດຍບໍ່ຖືກຕ້ອງຕາມກົດໝາຍ, ການຜະລິດ ແລະ ຄ້າຂາຍຢາເສບຕິດ, ການເຂົ້າຮ່ວມໃນກຸ່ມອົງການອາຊະຍາກຳ ແລະ ກຸ່ມຄົນທີ່ເກັບຄ່າຄຸ້ມຄອງ, ການກໍ່ການຮ້າຍ, ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ການກະທຳຜິດກ່ຽວກັບຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ການຊື້ ຂາຍ ຂໍ້ມູນພາຍໃນ ແລະ ການປັ່ນຕະຫຼາດ, ການລະເມີດລະບຽບການກ່ຽວກັບລະບອບພາສີ, ອາກອນຂອງລັດ, ການບັງຄັບນາບຂູ່ເອົາຊັບ, ການຈີ້ ລົດ, ເຮືອ, ເຮືອບິນ, ການປຸ້ນຢູ່ທະເລ ແລະ ການກະທຳຜິດຕົ້ນອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;
3. **ຫົວໜ່ວຍທີ່ມີໜ້າທີ່ລາຍງານ** ໝາຍເຖິງ ນິຕິບຸກຄົນ ແລະ ບຸກຄົນ ທີ່ມີຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດວຽກງານຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຊຶ່ງມີທະນາຄານທຸລະກິດ, ສະຖາບັນການເງິນຈຸລະພາກ, ໂຮງຊວດຈຳ, ບໍລິສັດເຊົ່າສິນເຊື່ອ, ຜູ້ໃຫ້ບໍລິການຊຳລະເງິນ, ບໍລິສັດປະກັນໄພ, ບໍລິສັດຫຼັກຊັບ, ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ, ກອງທຶນເພື່ອການລົງທຶນ, ຜູ້ໃຫ້ບໍລິການ ຊັບສິນເໝືອນຈິງ, ທຸລະກິດ ຊື້ ຂາຍ ອະສັງຫາລິມະຊັບ, ທຸລະກິດຊື້ ຂາຍ ວັດຖຸມີຄ່າ, ວິສາຫະກິດບັນຊີ, ວິສາຫະກິດກວດສອບ, ທຸລະກິດກາຊີໂນ, ວິສາຫະກິດກົດໝາຍ, ທະນາຍຄວາມ, ຫົວໜ່ວຍ ແລະ ບຸກຄົນອື່ນ ຕາມການກຳນົດຂອງຄະນະກຳມະການແຫ່ງຊາດເພື່ອຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ.

**ມາດຕາ 6 ນະໂຍບາຍ**

ນະໂຍບາຍກ່ຽວກັບວຽກງານ ການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໄດ້ກຳນົດໄວ້ໃນມາດຕາ 4 ຂອງກົດໝາຍວ່າດ້ວຍ ການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບປັບປຸງ.

**ມາດຕາ 7 ຫຼັກການພື້ນຖານກ່ຽວກັບການດຳເນີນຄະດີຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ**

ການດຳເນີນຄະດີຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໃຫ້ປະຕິບັດດັ່ງດຽວກັນກັບຫຼັກການພື້ນຖານ ຕາມທີ່ກຳນົດໄວ້ໃນມາດຕາ 10 ຂອງກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາ ສະບັບປັບປຸງ ປີ 2017.

## ໝວດທີ 2
## ການສືບສວນ-ສອບສວນຄະດີຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ

**ມາດຕາ 8 (ປັບປຸງ) ອົງການສືບສວນ-ສອບສວນ**

ອົງການສືບສວນ-ສອບສວນ ໄດ້ກຳນົດໄວ້ໃນມາດຕາ 46 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງ 2017 ມີດັ່ງນີ້:

1. ອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ຕຳຫຼວດ;
2. ອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ທະຫານ;
3. ອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ພາສີ, ອາກອນ;
4. ອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ປ່າໄມ້;
5. ອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ຕ້ານການສໍ້ລາດບັງຫຼວງ;
6. ອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ຫຼັກຊັບ;
7. ອົງການສືບສວນ-ສອບສວນ ຂອງພາກສ່ວນອື່ນທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 9 ສິດ ແລະ ໜ້າທີ່ຂອງອົງການສືບສວນ-ສອບສວນ**

ສິດ ແລະ ໜ້າທີ່ ຂອງອົງການສືບສວນ-ສອບສວນ ນອກຈາກທີ່ກຳນົດໄວ້ໃນມາດຕາ 47 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງ 2017 ແລະ ນິຕິກຳອື່ນ, ຍັງມີສິດ ແລະ ໜ້າທີ່ ໃນການສືບສວນ-ສອບສວນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຕາມທີ່ກຳນົດໄວ້ໃນຄຳແນະນຳສະບັບນີ້.

**ມາດຕາ 10 (ປັບປຸງ) ການເປີດ ຫຼື ບໍ່ເປີດ ການສືບສວນ-ສອບສວນ**

ໃນການດຳເນີນການສືບສວນ-ສອບສວນ ໃຫ້ປະຕິບັດຕາມພາກທີ **V** ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງ 2017.

ການເປີດ ຫຼື ບໍ່ເປີດ ການສືບສວນ-ສອບສວນ ໃຫ້ປະຕິບັດຕາມມາດຕາ 84, 85, 90, 91 ແລະ 92 ຂອງກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາ ສະບັບປັບປຸງ 2017.

ກ່ອນອອກຄຳສັ່ງ ເປີດການສືບສວນ-ສອບສວນ ຕ້ອງໃຫ້ບູລິມະສິດຕໍ່ບັນດາໄພຂົ່ມຂູ່ ຫຼື ຄວາມຜິດຕົ້ນທີ່ລະບຸໃນບົດລາຍງານຜົນການປະເມີນຄວາມສ່ຽງແຫ່ງຊາດ ກ່ຽວກັບການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໃນແຕ່ລະໄລຍະ ແລະ ເມື່ອອອກຄຳສັ່ງເປີດ ການສືບສວນ-ສອບສວນການກະທຳຜິດຕົ້ນ ແລ້ວຫາກພົບເຫັນຮ່ອງຮອຍ ຂອງການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍນັ້ນ ອົງການສືບສວນ-ສອບສວນ ຕ້ອງປັບປຸງ ຫຼື ເພີ່ມເຕີມ ຄຳສັ່ງເປີດການສືບສວນ-ສອບສວນ ໃນຂໍ້ກ່າວຫາ ການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຕື່ມອີກ.

ໃນກໍລະນີທີ່ອົງການສືບສວນ-ສອບສວນ ອອກຄຳສັ່ງບໍ່ເປີດ ການສືບສວນ-ສອບສວນ ໃນຂໍ້ກ່າວຫາ ການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແຕ່ຜ່ານການກວດກາ ຂອງອົງການໄອຍະການ ຫາກພົບເຫັນ ຮ່ອງຮອຍການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຫົວໜ້າອົງການໄອຍະການ ຕ້ອງລົບລ້າງຄຳສັ່ງບໍ່ເປີດການສືບສວນ-ສອບສວນຂອງອົງການສືບສວນ-ສອບສວນແລ້ວ ອອກຄຳສັ່ງເປີດການສືບສວນ-ສອບສວນ ແລະ ສົ່ງຄຳສັ່ງດັ່ງກ່າວໃຫ້ອົງການສືບສວນ-ສອບສວນ ເປັນຜູ້ດຳເນີນການສືບສວນ-ສອບສວນ ຫຼື ຈະທຳການສືບສວນ-ສອບສວນເອງກໍໄດ້ ຕາມທີ່ກຳນົດໄວ້ໃນມາດຕາ 94 ຂອງກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາ ສະບັບປັບປຸງ 2017.

ການປ່ຽນແປງ ຫຼື ເພີ່ມເຕີມ ຄຳສັ່ງເປີດການສືບສວນ-ສອບສວນ ໃຫ້ປະຕິບັດຕາມວັກ ຫ້າ, ຫົກ, ເຈັດ ແລະ ແປດ ຂອງມາດຕາ 91 ກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາ ສະບັບປັບປຸງ 2017.

ສຳລັບບົດລາຍງານຂ່າວກອງທາງດ້ານການເງິນຂອງ ສຳນັກງານຂໍ້ມູນຕ້ານການຟອກເງິນ ທີ່ສົ່ງໃຫ້ອົງການສືບສວນ-ສອບສວນ ເປັນການແຈ້ງຄວາມ. ສະນັ້ນ, ອົງການສືບສວນ-ສອບສວນ ຕ້ອງອອກຄຳສັ່ງເປີດການສືບສວນ-ສອບສວນ ຫຼື ບໍ່ເປີດການສືບສວນ-ສອບສວນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 90, 91 ແລະ 92 ຂອງກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາ ສະບັບປັບປຸງ 2017.

ພາຍຫຼັງອົງການສືບສວນ-ສອບສວນ ໄດ້ຮັບບົດລາຍງານຂ່າວກອງທາງດ້ານການເງິນ ຈາກສຳນັກງານຂໍ້ມູນຕ້ານການຟອກເງິນ ຕ້ອງມີຄຳເຫັນຕໍ່ກັບຄຸນນະພາບ, ຄວາມຄົບຖ້ວນ ແລະ ການນຳໃຊ້ບົດລາຍງານຂ່າວກອງທາງ

ດ້ານການເງິນ ທຸກຄັ້ງ ເພື່ອເປັນຂໍ້ມູນໃຫ້ກັບສຳນັກງານຂໍ້ມູນຕ້ານການຟອກເງິນ ໃນການປັບປຸງ ແລະ ແກ້ໄຂໃຫ້ມີຄຸນນະພາບດີຂຶ້ນໃນແຕ່ລະໄລຍະ.

## ມາດຕາ 11 (ປັບປຸງ) ວິທີການສືບສວນ-ສອບສວນ

ອົງການສືບສວນ-ສອບສວນ ແລະ ອົງການໄອຍະການ ໃຫ້ນຳໃຊ້ວິທີການສືບສວນ-ສອບສວນ ຕາມຄູ່ມືການດຳເນີນຄະດີອາຍາ ແລະ ພາກທີ 6, ໝວດທີ 1, 2 ແລະ 3 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງ 2017.

ການສືບສວນ-ສອບສວນການກະທຳຜິດຄົ້ນ ຕ້ອງດຳເນີນຄຽງຄູ່ກັບການສືບສວນ-ສອບສວນທາງດ້ານການເງິນ ແລະ ການຟອກເງິນ ຊຶ່ງອີງໃສ່ ຂໍ້ມູນ, ຫຼັກຖານ ແລະ ການຕິດຕາມ, ນຳຮອຍ ທຸລະກຳທາງດ້ານການເງິນ ຫຼື ຊັບສິນອື່ນທີ່ກ່ຽວຂ້ອງກັບຜູ້ກະທຳຜິດ ລວມທັງ ສະມາຊິກຄອບຄົວ ຫຼື ບຸກຄົນທີ່ມີສາຍພົວພັນໃກ້ຊິດກັບບຸກຄົນດັ່ງກ່າວ ໂດຍອີງໃສ່ການກະທຳທີ່ກຳນົດໄວ້ໃນມາດຕາ 2 ຂອງຄຳແນະນຳສະບັບນີ້.

ສຳລັບການຕິດຕາມ ແລະ ນຳຮອຍ ທຸລະກຳທາງດ້ານການເງິນ ຫຼື ຊັບສິນອື່ນທີ່ກ່ຽວຂ້ອງກັບຜູ້ກະທຳຜິດ ລວມທັງ ສະມາຊິກຄອບຄົວ ຫຼື ບຸກຄົນທີ່ມີສາຍພົວພັນໃກ້ຊິດກັບບຸກຄົນດັ່ງກ່າວ ເຄື່ອນຍ້າຍ ຫຼື ໂອນຖ່າຍໄປຕ່າງປະເທດ ແມ່ນໃຫ້ນຳໃຊ້ກົນໄກ ແລະ ຂັ້ນຕອນຂອງການຊ່ວຍເຫຼືອຊຶ່ງກັນ ແລະ ກັນ ທາງດ້ານກົດໝາຍ ຕາມກົດໝາຍວ່າດ້ວຍການຮ່ວມມືລະຫວ່າງປະເທດທາງອາຍາ, ກົດໝາຍອື່ນທີ່ກ່ຽວຂ້ອງຂອງ ສປປ ລາວ, ສົນທິສັນຍາທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

## ມາດຕາ 12 (ປັບປຸງ) ການນຳໃຊ້ມາດຕະການສືບສວນ-ສອບສວນ ແລະ ສະກັດກັ້ນ

ການນຳໃຊ້ມາດຕະການສືບສວນ-ສອບສວນ ແລະ ສະກັດກັ້ນ ໃຫ້ປະຕິບັດຕາມພາກທີ VI, ໝວດທີ 4 ແລະ 5 ຂອງກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາ ສະບັບປັບປຸງ 2017.

ນອກຈາກນີ້, ຕ້ອງໃຫ້ປະຕິບັດຕາມມາດຕາ 36 ຂອງກົດໝາຍ ວ່າດ້ວຍການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບປັບປຸງ, ການແຈ້ງໃຫ້ຫົວໜ່ວຍທີ່ມີໜ້າທີ່ລາຍງານ ໂຈະ ຫຼື ລະງັບການດຳເນີນທຸລະກຳທາງດ້ານການເງິນ ເພື່ອຍັບຍັ້ງການເຄື່ອນໄຫວຂອງ ທຶນ ຫຼື ຊັບສິນ ທີ່ພົວພັນກັບການກະທຳຜິດຄົ້ນ ຫຼື ການຟອກເງິນ 30 ວັນລັດຖະການ ກ່ອນອອກຄຳສັ່ງຍຶດ ຫຼື ອາຍັດຕາມຄຳແນະນຳ ວ່າດ້ວຍ ການນຳໃຊ້ມາດຕະການຊົ່ວຄາວຕໍ່ກັບຊັບສິນທີ່ພົວພັນກັບການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບປັບປຸງ ແລະ ຄຳສັ່ງວ່າດ້ວຍ ການກັກ, ການຍຶດ ແລະ ອາຍັດ ທຶນທີ່ພົວພັນກັບຜູ້ກໍ່ການຮ້າຍ ຫຼື ການສະໜອງທຶນໃຫ້ແກ່ການກໍ່ກາຍຮ້າຍ ສະບັບປັບປຸງ.

## ມາດຕາ 13 ບົດສະຫຼຸບຜົນຂອງການສືບສວນ-ສອບສວນ

ບົດສະຫຼຸບຜົນຂອງການສືບສວນ-ສອບສວນ ປະຕິບັດຕາມມາດຕາ 150 ຂອງກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາ ສະບັບປັບປຸງ 2017.

ສຳລັບບົດສະຫຼຸບຜົນຂອງການສືບສວນ-ສອບສວນຄະດີຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ນັ້ນ ອົງການສືບສວນ-ສອບສວນ ຕ້ອງປະກອບສຳນວນຄະດີສະເໜີໃຫ້ອົງການໄອຍະການ ສັ່ງຟ້ອງຄະດີດັ່ງກ່າວ ໃຫ້ສານຕັດສິນຕາມກົດໝາຍ.

## ໝວດທີ 3
## ການພິຈາລະນາບົດສະຫຼຸບຄະດີ ແລະ ການສັ່ງຟ້ອງ ຄະດີຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຂອງອົງການໄອຍະການ

## ມາດຕາ 14 ການຄົ້ນຄວ້າຄະດີ ແລະ ລົງຄຳເຫັນຂອງຫົວໜ້າອົງການໄອຍະການ

ການຄົ້ນຄວ້າຄະດີ, ລົງຄຳເຫັນ ແລະ ການສົ່ງສຳນວນຄະດີຄືນ ເພື່ອໃຫ້ສືບສວນ-ສອບສວນເພີ່ມເຕີມ ຂອງຫົວໜ້າອົງການໄອຍະການ ປະຕິບັດຕາມມາດຕາ 152 ແລະ 153 ຂອງກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາ ສະບັບປັບປຸງ 2017.

**ມາດຕາ 15 ການສັ່ງຟ້ອງຜູ້ຖືກຫາໃນຄະດີຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ**

ການສັ່ງຟ້ອງຜູ້ຖືກຫາ ປະຕິບັດຕາມມາດຕາ 154, 155 ແລະ 156 ຂອງກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາ ສະບັບປັບປຸງ 2017.

ກໍລະນີທີ່ອົງການສືບສວນ-ສອບສວນ ສະເໜີໃຫ້ສັ່ງຟ້ອງຄະດີຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແຕ່ອົງການໄອຍະການ ຕົກລົງບໍ່ສັ່ງຟ້ອງຜູ້ຖືກຫາຂຶ້ນສານ, ການປ່ຽນແປງ, ລົບລ້າງ ຫຼື ເພີ່ມເຕີມ ຂໍ້ກ່າວຫາ ຕ້ອງແຈ້ງໃຫ້ອົງການສືບສວນ-ສອບສວນ ຊາບ ເພື່ອປະຕິບັດສິດ ແລະ ໜ້າທີ່ຂອງອົງການສືບສວນ-ສອບສວນ ຕາມທີ່ກຳນົດໄວ້ໃນມາດຕາ 47 ຂໍ້ 6 ຂອງກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາ ສະບັບປັບປຸງ 2017.

## ໝວດທີ 4
## ຂັ້ນຕອນການພິຈາລະນາຕັດສິນ ຄະດີຟອກເງິນ ແລະ ການສະໜອງທຶນ ໃຫ້ແກ່ການກໍ່ການຮ້າຍ ຂອງສານ

**ມາດຕາ 16 ຂັ້ນຕອນການພິຈາລະນາຄະດີຂອງສານ**

ການພິຈາລະນາຄະດີຂອງສານ ຂັ້ນຕົ້ນ, ຂັ້ນອຸທອນ, ຂັ້ນລົບລ້າງ ຫຼື ຂັ້ນຮື້ຟື້ນ ປະຕິບັດຕາມ ພາກທີ VIII, IX, X ແລະ XII ຂອງກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາ ສະບັບປັບປຸງ 2017.

**ມາດຕາ 17 ການຮັບ ແລະ ກຳນົດເວລາໃນການພິຈາລະນາຕັດສິນ**

ການຮັບ ແລະ ກຳນົດເວລາໃນການພິຈາລະນາຕັດສິນ ໃຫ້ປະຕິບັດຕາມມາດຕາ 164 ແລະ 165 ຂອງກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາ ສະບັບປັບປຸງ 2017.

ໃນການພິຈາລະນາຕັດສິນ ສານມີສິດນຳໃຊ້ມາດຕະການສືບສວນ-ສອບສວນ ແລະ ມາດຕະການສະກັດກັ້ນ ຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາ ສະບັບປັບປຸງ 2017, ໃນກໍລະນີ ທີ່ທຶນ, ຊັບສິນ ແລະ ອື່ນໆ ທີ່ຕິດພັນກັບຄະດີການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ທີ່ຍັງບໍ່ຖືກຍຶດ ຫຼື ອາຍັດ ສານຕ້ອງອອກຄຳສັ່ງຍຶດ ຫຼື ອາຍັດ ຕາມແຕ່ກໍລະນີ.

**ມາດຕາ 18 ການຄົ້ນຄວ້າຄະດີ ຂອງສານຂັ້ນຕົ້ນ**

ການຄົ້ນຄວ້າຄະດີ ໃຫ້ປະຕິບັດຕາມມາດຕາ 167 ແລະ 168 ຂອງກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາ ສະບັບປັບປຸງ 2017.

**ມາດຕາ 19 ການອອກຄຳສັ່ງນຳເອົາຄະດີອອກມາພິຈາລະນາໃນທີ່ປະຊຸມສານ**

ການອອກຄຳສັ່ງນຳເອົາຄະດີອອກມາພິຈາລະນາໃນທີ່ປະຊຸມສານ ໃຫ້ປະຕິບັດຕາມມາດຕາ 169 ແລະ 170 ຂອງກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາ ສະບັບປັບປຸງ 2017.

**ມາດຕາ 20 (ປັບປຸງ) ການພິຈາລະນາຕັດສິນຄະດີຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ**

ໃນການພິຈາລະນາຕັດສິນລົງໂທດ ຈຳເລີຍໃນຂໍ້ກ່າວຫາ ການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຕ້ອງໄດ້ອີງໃສ່ ກ່ຽວກັບ ການກຳນົດໂທດ ໃສ່ການກະທຳຜິດຕົ້ນ ແລະ ການກະທຳຜິດໃນສະຖານຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຢ່າງລະອຽດ, ຈະແຈ້ງ ຕາມຫຼັກການລວມຂອງການວາງໂທດ ຕາມທີ່ກຳນົດໄວ້ໃນປະມວນກົດໝາຍອາຍາ ສະບັບປີ 2017.

ມາດຕະການທາງດ້ານອາຍາຕໍ່ ການຟອກເງິນ, ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະ ມາດຕະການອື່ນ ປະຕິບັດຕາມ ມາດຕາ 56 ແລະ 57 ຂອງກົດໝາຍວ່າດ້ວຍການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບປັບປຸງ.

**ມາດຕາ 21 ການອອກຄໍາສັ່ງນໍາເອົາຄໍາຕັດສິນ ຄະດີຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ທີ່ໃຊ້ໄດ້ຢ່າງເດັດຂາດ ເພື່ອຈັດຕັ້ງປະຕິບັດ**

ການອອກຄໍາສັ່ງນໍາເອົາຄໍາຕັດສິນ ຄະດີຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ທີ່ໃຊ້ໄດ້ຢ່າງເດັດຂາດ ໃຫ້ປະຕິບັດຕາມມາດຕາ 236, 240, 246 ແລະ 247 ຂອງກົດໝາຍວ່າດ້ວຍການດໍາເນີນຄະດີອາຍາ ສະບັບປັບປຸງປີ 2017.

## ໝວດທີ 5
## ການຈັດຕັ້ງປະຕິບັດຄໍາຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ

**ມາດຕາ 22 ການປະຕິບັດໂທດຕັດອິດສະລະພາບ ແລະ ໂທດອື່ນ**

ການປະຕິບັດໂທດຕັດອິດສະລະພາບ ແລະ ໂທດອື່ນ ໃຫ້ປະຕິບັດຕາມທີ່ໄດ້ກໍານົດໄວ້ມາດຕາ 240, 241, 243 ແລະ 245 ຂອງກົດໝາຍວ່າດ້ວຍ ການດໍາເນີນຄະດີອາຍາ ສະບັບປັບປຸງປີ 2017.

ສໍາລັບລະບຽບການ ແລະ ຂັ້ນຕອນການປະຕິບັດໂທດປະຫານຊີວິດ ປະຕິບັດຕາມມາດຕາ 255 ແລະ 256 ຂອງກົດໝາຍວ່າດ້ວຍ ການດໍາເນີນຄະດີອາຍາ ສະບັບປັບປຸງປີ 2017 ແລະ ບົດບັນທຶກ ຫຼື ນິຕິກໍາອື່ນ ທີ່ໄດ້ກໍານົດກ່ຽວກັບຂັ້ນຕອນ ແລະ ລະບຽບການປະຕິບັດໂທດ.

ການປະຕິບັດໂທດໃນຄະດີຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ກໍໃຫ້ປະຕິບັດ ເຊັ່ນດຽວກັນກັບທີ່ກໍານົດໄວ້ຂ້າງເທິງນີ້.

**ມາດຕາ 23 ການປະຕິບັດໂທດປັບໄໝ, ຣິບຊັບ, ໂທດຣິບວັດຖຸສິ່ງຂອງ ແລະ ການໃຊ້ແທນຄ່າເສຍຫາຍ**

ການປະຕິບັດໂທດປັບໄໝ, ຣິບຊັບ, ໂທດຣິບວັດຖຸສິ່ງຂອງ ແລະ ການໃຊ້ແທນຄ່າເສຍຫາຍ ໃຫ້ປະຕິບັດຕາມມາດຕາ 246 ແລະ 247 ຂອງກົດໝາຍວ່າດ້ວຍ ການດໍາເນີນຄະດີອາຍາ ສະບັບປັບປຸງປີ 2017 ແລະ ມາດຕາ 37 ຂອງກົດໝາຍວ່າດ້ວຍ ການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບປັບປຸງ.

## ໝວດທີ 6
## ການເກັບສະຖິຕິ ແລະ ສະໜອງຂໍ້ມູນ

**ມາດຕາ 24 ການເກັບກໍາສະຖິຕິ**

ອົງການດໍາເນີນຄະດີອາຍາ ແລະ ກະຊວງຍຸຕິທໍາ ເກັບກໍາສະຖິຕິ ການສືບສວນ-ສອບສວນ, ສັ່ງຟ້ອງ, ການຕັດສິນ ແລະ ປະຕິບັດຄໍາຕັດສິນ ກ່ຽວກັບຄະດີຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍແມ່ນປະຕິບັດຕາມເອກະສານຊ້ອນທ້າຍ ຂອງຄໍາແນະນໍາສະບັບນີ້.

**ມາດຕາ 25 ການສະໜອງຂໍ້ມູນ**

ອົງການດໍາເນີນຄະດີອາຍາ ແລະ ກະຊວງຍຸຕິທໍາ ສະໜອງຂໍ້ມູນສະຖິຕິຕາມທີ່ກໍາໄວ້ໃນໝວດທີ 2, 3, 4 ແລະ 5 ຂອງຄໍາແນະນໍາສະບັບນີ້ ໃຫ້ສໍານັກງານຂໍ້ມູນຕ້ານການຟອກເງິນ ສອງ ຄັ້ງ ຕໍ່ປີ ໃນຮູບແບບເອເລັກໂຕຼນິກທີ່ສໍານັກງານຂໍ້ມູນຕ້ານການຟອກເງິນ ໄດ້ສະໜອງ ຊື່ຜູ້ນໍາໃຊ້ ແລະ ລະຫັດຜ່ານ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 26 ການຈັດຕັ້ງປະຕິບັດ**

ອົງການສືບສວນ-ສອບສວນ, ອົງການໄອຍະການປະຊາຊົນ, ສານປະຊາຊົນ ແລະ ກະຊວງຍຸຕິທໍາ ທັງໃນຂັ້ນສູນກາງ ແລະ ທ້ອງຖິ່ນ ປະສານສົມທົບ ແລະ ເຮັດວຽກຮ່ວມກັນ ເພື່ອປຶກສາຫາລື ກັບໄກການຈັດຕັ້ງປະຕິບັດ ຕົວຈິງ ໃຫ້ເປັນຮູບປະທໍາ ແລະ ມີປະສິດທິຜົນ.

ບັນດາກະຊວງ ແລະ ອົງການຈັດຕັ້ງ ທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຄໍາແນະນໍາສະບັບນີ້ ໃຫ້ໄດ້ຮັບຜົນດີ ແລະ ລາຍງານສະພາບໃຫ້ລັດຖະບານຊາບໃນແຕ່ລະໄລຍະ.

**ມາດຕາ 27 ຜົນສັກສິດ**

ຄໍາແນະນໍາສະບັບນີ້ ມີຜົນສັກສິດນັບແຕ່ວັນທີ່ລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນຄໍາສັ່ງແນະນໍາວ່າດ້ວຍການດໍາເນີນຄະດີຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບເລກທີ 01/ຄຕຟງ, ລົງວັນທີ 08 ມັງກອນ 2020.

ຂໍ້ກໍານົດ, ບົດບັນຍັດໃດ ທີ່ຂັດກັບຄໍາແນະນໍາສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ປະທານຄະນະກໍາມະການແຫ່ງຊາດ ເພື່ອຕ້ານການຟອກເງິນ**
**ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ**

ປະທານ

**ສະເຫລີມໄຊ ກົມມະສິດ**

ເອກະສານຊ້ອນທ້າຍ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

....................

ເລກທີ........./.......

ອົງການສືບສວນສອບສວນ ຂອງເຈົ້າໜ້າທີ່ຕຳຫຼວດ

.........ວັນທີວັນທີ .................

**ສະຖິຕິ ການເປີດ ຫຼື ບໍ່ເປີດ ການສືບສວນ-ສອບສວນ**

ການກະທຳຜິດຄົ້ນ, ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ

(ໃຫ້ເກັບສະຖິຕິຈາກວັນທີ 16 ຂອງເດືອນນີ້ ຫາ 15 ຂອງເດືອນຖັດໄປ ເປັນໜຶ່ງເດືອນ

ແລ້ວສົ່ງສະຖິຕິໃນລະຫວ່າງວັນທີ 16-20 ໃຫ້ກັບ................................)

| ລ/ດ | ຄຳສັ່ງເປີດການສືບສວນ-ສອບສວນ ການກະທຳຜິດຄົ້ນ | | ເປີດ ຫຼື ບໍ່ເປີດ ການ ສສ-ສສ ການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ | | ມູນຄ່າຊັບສິນທີ່ຖືກຍຶດ ຫຼື ອາຍັດ ສະເພາະແຕ່ການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ | ຜົນຂອງການສືບສວນ-ສອບສວນ | | ໝາຍເຫດ |
|---|---|---|---|---|---|---|---|---|
| | ເລກທີ ...ລົງວັນທີ... | ຂໍ້ກ່າວຫາ | ບໍ່ເປີດ | ເປີດ | | ໂຈະ ຫຼື ຊັດມ້ຽນ | ວ.ດ.ກ ສະຫຼຸບສົ່ງອຍກ | |
| **1** | **2** | **3** | **4** | **5** | **6** | **7** | **8** | **9** |
| 1 | 02 | ຢາເສບຕິດ | - | ເປີດ | ກີບ | - | 29.3.20 | |
| 2 | 03 | ສໍ້ໂກງຊັບຂອງລັດ | - | ເປີດ | ລົດ | | | |
| 3 | | | | | | | | |
| 4 | | | | | | | | |

**ຫົວໜ້າ ອົງການສືບສວນ-ສອບສວນເຈົ້າໜ້າທີ່ຕຳຫຼວດ**

**ຜູ້ສັງລວມ**

ບ່ອນສົ່ງ:

- ສຳນັກງານຂໍ້ມູນຕ້ານການຟອກເງິນ, ທະນາຄານແຫ່ງ ສປປ ລາວ;
- ສຳເນົາໄວ້ 02 ສະບັບ.

| ເອກະສານຊ້ອນທ້າຍ |
|---|

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

..................... ເລກທີ........./.......

ອົງການສືບສວນສອບສວນ ຂອງເຈົ້າໜ້າທີ່ທະຫານ ..........ວັນທີວັນທີ ..................

**ສະຖິຕິ ການເປີດ ຫຼື ບໍ່ເປີດ ການສືບສວນ-ສອບສວນ**

ການກະທຳຜິດຕົ້ນ, ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ
(ໃຫ້ເກັບສະຖິຕິຈາກວັນທີ 16 ຂອງເດືອນນີ້ ຫາ 15 ຂອງເດືອນຖັດໄປ ເປັນໜຶ່ງເດືອນ
ແລ້ວສົ່ງສະຖິຕິໃນລະຫວ່າງວັນທີ 16-20 ໃຫ້ກັບ............................)

| ລ/ດ | ຄຳສັ່ງເປີດການສືບສວນ-ສອບສວນ ການກະທຳຜິດຕົ້ນ | | ເປີດ ຫຼື ບໍ່ເປີດ ການ ສສ-ສສ ການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ | | ມູນຄ່າຊັບສິນທີ່ຖືກຍຶດ ຫຼື ອາຍັດ ສະເພາະແຕ່ ການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ | ຜົນຂອງການສືບສວນ-ສອບສວນ | | ໝາຍເຫດ |
|---|---|---|---|---|---|---|---|---|
| | ເລກທີ ...ລົງວັນທີ... | ຂໍ້ກ່າວຫາ | ບໍ່ເປີດ | ເປີດ | | ໂຈະ ຫຼື ຊັດມ້ຽນ | ອ.ດ.ກ ສະຫຼຸບສົ່ງອຍກ | |
| **1** | **2** | **3** | **4** | **5** | **6** | **7** | **8** | **9** |
| 1 | 02 | ຢາເສບຕິດ | - | ເປີດ | ດິນ | - | 29.3.20 | |
| 2 | 03 | ສໍ້ໂກງຊັບຂອງລັດ | - | ເປີດ | ລົດ | | | |
| 3 | | | | | | | | |
| 4 | | | | | | | | |

**ຫົວໜ້າ ອົງການສືບສວນ-ສອບສວນເຈົ້າໜ້າທີ່........**

**ຜູ້ສັງລວມ**

**ບ່ອນສົ່ງ:**

- ສຳນັກງານຂໍ້ມູນຕ້ານການຟອກເງິນ, ທະນາຄານແຫ່ງ ສປປ ລາວ;
- ສຳເນົາໄວ້ 02 ສະບັບ.

ເອກະສານຊ້ອນທ້າຍ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

.................... ເລກທີ........./.......

ອົງການສືບສວນສອບສວນ ຂອງເຈົ້າໜ້າທີ່ພາສ, ອາກອນ .......ວັນທີວັນທີ ....................

## ສະຖິຕິ ການເປີດ ຫຼື ບໍ່ເປີດ ການສືບສວນ-ສອບສວນ

ການກະທຳຜິດຕົ້ນ, ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ
(ໃຫ້ເກັບສະຖິຕິຈາກວັນທີ 16 ຂອງເດືອນນີ້ ຫາ 15 ຂອງເດືອນຖັດໄປ ເປັນໜຶ່ງເດືອນ
ແລ້ວສົ່ງສະຖິຕິໃນລະຫວ່າງວັນທີ 16-20 ໃຫ້ກັບ....................)

| ລ/ດ | ຄຳສັ່ງເປີດການສືບສວນ-ສອບສວນ ການກະທຳຜິດຕົ້ນ | | ເປີດ ຫຼື ບໍ່ເປີດ ການ ສສ-ສສ ການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ | | ມູນຄ່າຊັບສິນທີ່ຖືກຍຶດ ຫຼື ອາຍັດ ສະເພາະແຕ່ການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ | ຜົນຂອງການສືບສວນ-ສອບສວນ | | ໝາຍເຫດ |
|---|---|---|---|---|---|---|---|---|
| | ເລກທີ ...ລົງວັນທີ... | ຂໍ້ກ່າວຫາ | ບໍ່ເປີດ | ເປີດ | | ໃຈະ ຫຼື ຊັດມ້ຽນ | ອ.ດ.ກ ສະຫຼຸບສົ່ງອຍກ | |
| **1** | **2** | **3** | **4** | **5** | **6** | **7** | **8** | **9** |
| 1 | 02 | ຢາເສບຕິດ | - | ເປີດ | ດິນ | - | 29.3.20 | |
| 2 | 03 | ສໍ້ໂກງຊັບຂອງລັດ | - | ເປີດ | ລົດ | | | |
| 3 | | | | | | | | |
| 4 | | | | | | | | |

**ຫົວໜ້າ ອົງການສືບສວນ-ສອບສວນເຈົ້າໜ້າທີ່........**

**ຜູ້ສັງລວມ**

**ບ່ອນສົ່ງ:**

- ສຳນັກງານຂໍ້ມູນຕ້ານການຟອກເງິນ, ທະນາຄານແຫ່ງ ສປປ ລາວ;
- ສຳເນົາໄວ້ 02 ສະບັບ.

ເອກະສານຊ້ອນທ້າຍ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

..................... ເລກທີ........./.......

ອົງການສືບສວນສອບສວນ ຂອງເຈົ້າໜ້າທີ່ປ່າໄມ້ .........ວັນທີວັນທີ .................

**ສະຖິຕິ ການເປີດ ຫຼື ບໍ່ເປີດ ການສືບສວນ-ສອບສວນ**

ການກະທຳຜິດຕົ້ນ, ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ

(ໃຫ້ເກັບສະຖິຕິຈາກວັນທີ 16 ຂອງເດືອນນີ້ ຫາ 15 ຂອງເດືອນຖັດໄປ ເປັນໜຶ່ງເດືອນ

ແລ້ວສົ່ງສະຖິຕິໃນລະຫວ່າງວັນທີ 16-20 ໃຫ້ກັບ.........................)

| ລ/ດ | ຄຳສັ່ງເປີດການສືບສວນ-ສອບສວນ ການກະທຳຜິດຕົ້ນ | | ເປີດ ຫຼື ບໍ່ເປີດ ການ ສສ-ສສ ການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ | | ມູນຄ່າຊັບສິນທີ່ຖືກຍຶດ ຫຼື ອາຍັດ ສະເພາະແຕ່ການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ | ຜົນຂອງການສືບສວນ-ສອບສວນ | | ໝາຍເຫດ |
|---|---|---|---|---|---|---|---|---|
| | ເລກທີ ...ລົງວັນທີ... | ຂໍ້ກ່າວຫາ | ບໍ່ເປີດ | ເປີດ | | ໃຈະ ຫຼື ຊັດມ້ຽນ | ອ.ດ.ກ ສະຫຼຸບສົ່ງອຍກ | |
| **1** | **2** | **3** | **4** | **5** | **6** | **7** | **8** | **9** |
| 1 | 02 | ຢາເສບຕິດ | - | ເປີດ | ດິນ | - | 29.3.20 | |
| 2 | 03 | ສໍ້ໂກງຊັບຂອງລັດ | - | ເປີດ | ລົດ | | | |
| 3 | | | | | | | | |
| 4 | | | | | | | | |

**ຫົວໜ້າ ອົງການສືບສວນ-ສອບສວນເຈົ້າໜ້າທີ່........**

**ຜູ້ສັງລວມ**

**ບ່ອນສົ່ງ:**

- ສຳນັກງານຂໍ້ມູນຕ້ານການຟອກເງິນ, ທະນາຄານແຫ່ງ ສປປ ລາວ;
- ສຳເນົາໄວ້ 02 ສະບັບ.

ເອກະສານຊ້ອນທ້າຍ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

.....................

ເລກທີ........./.......

ອົງການສືບສວນສອບສວນ ຂອງເຈົ້າໜ້າທີ່ຕ້ານການສໍ້ລາດບັງຫຼວງ

.........ວັນທີວັນທີ ...............

**ສະຖິຕິ ການເປີດ ຫຼື ບໍ່ເປີດ ການສືບສວນ-ສອບສວນ**

ການກະທຳຜິດຕົ້ນ, ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ

(ໃຫ້ເກັບສະຖິຕິຈາກວັນທີ 16 ຂອງເດືອນນີ້ ຫາ 15 ຂອງເດືອນຖັດໄປ ເປັນໜຶ່ງເດືອນ

ແລ້ວສົ່ງສະຖິຕິໃນລະຫວ່າງວັນທີ 16-20 ໃຫ້ກັບ........................)

| ລ/ດ | ຄຳສັ່ງເປີດການສືບສວນ-ສອບສວນ ການກະທຳຜິດຕົ້ນ | | ເປີດ ຫຼື ບໍ່ເປີດ ການ ສສ-ສສ ການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ | | ມູນຄ່າຊັບສິນທີ່ຖືກຍຶດ ຫຼື ອາຍັດ ສະເພາະແຕ່ການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ | ຜົນຂອງການສືບສວນ-ສອບສວນ | | ໝາຍເຫດ |
|---|---|---|---|---|---|---|---|---|
| | ເລກທີ ...ລົງວັນທີ... | ຂໍ້ກ່າວຫາ | ບໍ່ເປີດ | ເປີດ | | ໂຈະ ຫຼື ຊັດມ້ຽນ | ອ.ດ.ກ ສະຫຼຸບສົ່ງອຍກ | |
| **1** | **2** | **3** | **4** | **5** | **6** | **7** | **8** | **9** |
| 1 | 02 | ຢາເສບຕິດ | - | ເປີດ | ດິນ | - | 29.3.20 | |
| 2 | 03 | ສໍ້ໂກງຊັບຂອງລັດ | - | ເປີດ | ລົດ | | | |
| 3 | | | | | | | | |
| 4 | | | | | | | | |

**ຫົວໜ້າ ອົງການສືບສວນ-ສອບສວນເຈົ້າໜ້າທີ່.........**

**ຜູ້ສັງລວມ**

**ບ່ອນສົ່ງ:**

- ສຳນັກງານຂໍ້ມູນຕ້ານການຟອກເງິນ, ທະນາຄານແຫ່ງ ສປປ ລາວ;
- ສຳເນົາໄວ້ 02 ສະບັບ.

| ເອກະສານຊ້ອນທ້າຍ |
|---|

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ອົງການໄອຍະການ................. ເລກທີ........./..........

........................................ .............ວັນທີ ....................

**ສະຖິຕິຄະດີອາຍາ**

ການກະທຳຜິດຕົ້ນ, ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ

(ໃຫ້ເກັບສະຖິຕິຈາກວັນທີ 16 ຂອງເດືອນນີ້ ຫາ 15 ຂອງເດືອນຖັດໄປ ເປັນໜຶ່ງເດືອນ

ແລ້ວສົ່ງສະຖິຕິໃນລະຫວ່າງວັນທີ 16-20 ມາຍັງກົມຕິດຕາມກວດກາການດຳເນີນຄະດີອາຍາ)

| ລ/ດ | ອອກຄຳສັ່ງຟ້ອງ ການກະທຳຜິດຕົ້ນ | | ອອກຄຳສັ່ງຟ້ອງ ຫຼື ບໍ່ອອກຄຳສັ່ງຟ້ອງ ການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ | | ຄຳສັ່ງຟ້ອງ, ລົງວັນທີ | ມູນຄ່າຊັບສິນທີ່ຖືກສັ່ງຟ້ອງ ສະເພາະແກ່ການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ | ໝາຍເຫດ |
|---|---|---|---|---|---|---|---|
| | ເລກທີ.... ລົງວັນທີ... | ຂໍ້ກ່າວຫາ | ບໍ່ອອກ | ອອກ | | | |
| 1 | 2 | 3 | 4 | 5 | 6 | 7 | 8 |
| 1 | 15/ຂຕ.ອ 22.6.19 | ຢາເສບຕິດ | - | ຟອກເງິນ | 156/ອຍກ 22.6.19 | | |
| 2 | 17/ຂຕ.ອ | ສໍ້ໂກງຊັບ ຂອງລັດ | - | ຟອກເງິນ | 157/ອຍກ | | |
| 3 | | | | | | | |
| 4 | | | | | | | |

**ຫົວໜ້າໄອຍະການ.....**

**ຜູ້ສັງລວມ**

**ບ່ອນສົ່ງ:**

- ກົມຕິດຕາມກວດກາການດຳເນີນຄະດີອາຍາ, ອົງການໄອຍະການປະຊາຊົນສູງສຸດ;
- ສຳເນົາໄວ້ 02 ສະບັບ.

ເອກະສານຊ້ອນທ້າຍ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສານປະຊາຊົນ........ ເລກທີ........./.........

...................... .............ວັນທີ

**ສະຖິຕິ ການຕັດສິນຄະດີອາຍາ**

ການກະທຳຜິດຕົ້ນ, ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ

(ໃຫ້ເກັບສະຖິຕິຈາກວັນທີ 16 ຂອງເດືອນນີ້ ຫາ 15 ຂອງເດືອນຖັດໄປ ເປັນໜຶ່ງເດືອນ ແລ້ວສົ່ງສະຖິຕິໃນລະຫວ່າງວັນທີ 16-20 ມາຍັງກົມຄຸ້ມຄອງວິຊາການ ແລະ ສະຖິຕິສານ)

| ລ/ດ | ຄຳຕັດສິນ ການກະທຳຜິດຕົ້ນ | | ຄຳຕັດສິນຄະດີ ຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ | | ເລກທີ, ລົງວັນທີ ຄຳຕັດສິນ | ມູນຄ່າ ວັດຖຸ, ຊັບສິນ ທີ່ ສານຕັດສິນ ຄະດີ ການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ | | | ໝາຍເຫດ |
|---|---|---|---|---|---|---|---|---|---|
| | ເລກທີ... ລົງວັນທີ.. | ຂໍ້ກ່າວຫາ | ບໍ່ ຕັດສິນ | ຕັດສິນ | | ໄຫດ | ຮິບ | ທຳລາຍ ຫຼື ສົ່ງຄືນ | |
| **1** | **2** | **3** | **4** | **5** | **6** | **7** | **8** | **9** | **10** |
| 1 | 15/ຂຕ.ອ 22.6.19 | ຢາເສບຕິດ | - | ຟອກເງິນ | 156/ອຍກ 22.6.19 | | | | |
| 2 | 17/ຂຕ.ອ | ສໍ້ໂກງຊັບ ຂອງລັດ | - | ຟອກເງິນ | 157/ອຍກ | | | | |
| 3 | | | | | | | | | |
| 4 | | | | | | | | | |

**ສານປະຊາຊົນ.....**

**ຜູ້ສັງລວມ**

ບ່ອນສົ່ງ:

- ກົມຄຸ້ມຄອງວິຊາການ ແລະ ສະຖິຕິສານ;
- ສຳເນົາໄວ້ 02 ສະບັບ.

ເອກະສານຊ້ອນທ້າຍ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງຍຸຕິທຳ...... ເລກທີ........./.........

...................... ..............ວັນທີ

**ສະຖິຕິ ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ**

ການກະທຳຜິດຕົ້ນ, ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ

(ໃຫ້ເກັບສະຖິຕິຈາກວັນທີ 16 ຂອງເດືອນນີ້ ຫາ 15 ຂອງເດືອນຖັດໄປ ເປັນໜຶ່ງເດືອນ
ແລ້ວສົ່ງສະຖິຕິໃນລະຫວ່າງວັນທີ 16-20 ມາ..........)

| ລ/ດ | **ຊື່ ແລະ ນາມສະກຸນ ຈຳເລີຍ** | **ໄຫດປັບໃໝ ໃນຄຳຕັດສິນຄະດີຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ** | | **ໝາຍເຫດ** |
|---|---|---|---|---|
| | | **ຮິບ** | **ທຳລາຍຫຼື ສົ່ງຄືນ** | |
| **1** | **2** | **3** | **4** | **5** |
| 1 | ທ. ການ | - | ຟອກເງິນ | |
| 2 | ນ. ສກດ | - | ຟອກເງິນ | |
| 3 | | | | |
| 4 | | | | |

....................

**ຜູ້ສັງລວມ**

**ບ່ອນສົ່ງ:**

- ພະແນກປະຕິບັດຄຳຕັດສິນຂອງສານ;
- ສຳເນົາໄວ້ 02 ສະບັບ.